ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------=====000=====------

ກະຊວງການເງິນ

ກົມພາສີ

09523

ເລກທີ /ກພສ

ນະຄອນຫຼວງວຽງຈັນ, ວັນທີ 16 SEP 2016

## ບົດແນະນຳຂອງກົມພາສີ

## ວ່າດ້ວຍວິທີການຄຸ້ມຄອງ ການຈັດເກັບຄ່າອາກອນມູນຄ່າເພີ່ມສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ ໃນອັດຕາສິບສ່ວນຮ້ອຍ (10%) ຂອງມູນຄ່າເຄື່ອງຂອງ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 1765/ກງ, ລົງວັນທີ 03 ມິຖຸນາ 2015 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມພາສີ;
- ອີງຕາມ ຂໍ້ກຳນົດຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2834/ກງ, ລົງວັນທີ 30 ສິງຫາ 2016 ວ່າດ້ວຍການຈັດເກັບຄ່າອາກອນມູນຄ່າເພີ່ມ ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ ໃນອັດຕາສິບສ່ວນຮ້ອຍ (10%) ຂອງມູນຄ່າເຄື່ອງຂອງ;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະກົມພາສີ ຄັ້ງວັນທີ 16 ກັນຍາ 2016.

## ກົມພາສີ ອອກບົດແນະນຳ :

**1. ຈຸດປະສົງ**

ບົດແນະນຳສະບັບນີ້ ກຳນົດ ລະບຽບການ, ວິທີການ, ຂັ້ນຕອນ ແລະ ມາດຕະການ ຈັດຕັ້ງປະຕິບັດຂໍ້ກຳນົດຂອງກະຊວງການເງິນ ສະບັບເລກທີ 2834/ກງ, ລົງວັນທີ 30 ສິງຫາ 2016 ແນໃສ່ເພື່ອອຳນວຍຄວາມສະດວກໃຫ້ຜູ້ໂດຍສານທີ່ເດີນທາງ ເຂົ້າ-ອອກເມືອງ ຜ່ານດ່ານພາສີຊາຍແດນ ພ້ອມທັງຮັບປະກັນໃນການຈັດເກັບອາກອນມູນຄ່າເພີ່ມ (10%) ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ ເພື່ອມອບເຂົ້າງົບປະມານແຫ່ງລັດໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ.

**2. ການອະທິບາຍຄຳສັບ**

- **ຜູ້ໂດຍສານ** ໝາຍເຖິງ ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ກຳລັງຊີວິດຢູ່ ສປປ ລາວ ຊຶ່ງໄດ້ເດີນທາງເຂົ້າ ສປປ ລາວ ຜ່ານດ່ານພາສີຊາຍແດນ ລວມທັງດ່ານພາສີສະໜາມບິນສາກົນ ເປັນບາງຄັ້ງຄາວ ຫຼື ບໍ່ມີລັກສະນະປະຈຳ (ບໍ່ເກີນສອງຄັ້ງ/ເດືອນ);

- **ເຄື່ອງຂອງຕິດຕົວຜູ້ໂດຍສານ** ໝາຍເຖິງ ເຄື່ອງຂອງ (ໃໝ່ ຫຼື ຖືກນຳໃຊ້ແລ້ວ) ຊຶ່ງມີຄວາມຈຳເປັນ ສຳລັບການໃຊ້ສອຍ ໃນໄລຍະການເດີນທາງຂອງຜູ້ໂດຍສານ ຊຶ່ງບໍ່ລວມເຖິງສິນຄ້າ, ເຄື່ອງຂອງ ນຳເຂົ້າ ທີ່ມີລັກສະນະທາງການຄ້າ;
- **ເຄື່ອງອຸປະໂພກ-ບໍລິໂພກ** ໝາຍເຖິງ ເຄື່ອງໃຊ້ສອຍ ທີ່ຈຳເປັນຮັບໃຊ້ພາຍໃນຄົວເຮືອນ;
- **ເຄື່ອງທີ່ບໍ່ມີລັກສະນະທາງການຄ້າ** ໝາຍເຖິງ ເຄື່ອງໃຊ້ສອຍປະຈຳວັນ ທີ່ມີຫຼາຍຊະນິດ ແຕ່ລະຊະນິດບໍ່ເປັນຈຳນວນຫຼາຍ ແລະ ມີມູນຄ່າບໍ່ສູງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**3. ຂອບເຂດການນຳໃຊ້**

ບົດແນະນຳສະບັບນີ້ ນຳໃຊ້ສະເພາະເພື່ອການຄຸ້ມຄອງ ການຈັດເກັບອາກອນມູນຄ່າເພີ່ມ (10%) ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານເຂົ້າ ສປປ ລາວ ຜ່ານດ່ານພາສີຊາຍແດນ ລວມທັງດ່ານພາສີສະໜາມບິນສາກົນ ໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

**4. ຫຼັກການຈັດເກັບອາກອນມູນຄ່າເພີ່ມ (10%) ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ**

ການຈັດເກັບອາກອນມູນຄ່າເພີ່ມ ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ ຕ້ອງຮັບປະກັນຫຼັກການ ດັ່ງນີ້ :

- ຮັບປະກັນການຄຸ້ມຄອງ ຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
- ບໍລິການຈັດເກັບດ້ວຍຄວາມວ່ອງໄວ, ສະດວກງ່າຍດາຍ, ໂປ່ງໃສ ແລະ ສາມາດກວດສອບໄດ້;
- ອຳນວຍຄວາມສະດວກ ໃຫ້ຜູ້ໂດຍສານເຂົ້າ ຜ່ານດ່ານພາສີຊາຍແດນ ລວມທັງດ່ານພາສີສະໜາມບິນສາກົນ.

**5. ລະບຽບການ ແລະ ຂັ້ນຕອນ ການແຈ້ງເຄື່ອງຂອງຕິດຕົວຜູ້ໂດຍສານຂາເຂົ້າ**

- ໃນເວລາທີ່ຜູ້ໂດຍສານຈະເດີນທາງອອກ ຫຼື ເຂົ້າ ຜ່ານດ່ານພາສີຊາຍແດນ, ເຈົ້າໜ້າທີ່ພາສີ ຕ້ອງໄດ້ແນະນຳລະບຽບກ່ຽວກັບການແຈ້ງເຄື່ອງຂອງຕິດຕົວຜູ້ໂດຍສານ ແລະ ແບບພິມໃບແຈ້ງແບບທົ່ວໄປ ແລະ/ຫຼື ແບບເອເລັກໂຕຣນິກ ເພື່ອໃຫ້ຜູ້ໂດຍສານ ແຈ້ງລາຍການເຄື່ອງຂອງທີ່ຕົນໄດ້ນຳເຂົ້າມາ;
- ຜູ້ໂດຍສານ ຕ້ອງປະກອບຂໍ້ມູນໃສ່ໃບແຈ້ງ ຕາມແບບພິມທີ່ລັດຖະການພາສີໄດ້ກຳນົດ, ພາຍຫຼັງເດີນທາງມາຮອດ ສປປ ລາວ ຕ້ອງຍື່ນໃບແຈ້ງດັ່ງກ່າວ ຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານບ່ອນຂາເຂົ້າ ຕາມລະບຽບການກຳນົດ;
- ໃນກໍລະນີທີ່ເປັນເຄື່ອງຂອງຊື້ໃໝ່ຈາກຕ່າງປະເທດ ຕ້ອງນຳເອົາໃບເກັບເງິນ (Bill) ທີ່ກ່ຽວຂ້ອງກັບເຄື່ອງຂອງດັ່ງກ່າວ ຄັດຕິດໃບແຈ້ງຍື່ນຕໍ່ເຈົ້າໜ້າທີ່ພາສີ ເພື່ອດຳເນີນການຄິດໄລ່ອາກອນມູນຄ່າເພີ່ມ ໃຫ້ຖືກຕ້ອງ ແລະ ວ່ອງໄວ;
- ລັດຖະການພາສີປະຈຳດ່ານຊາຍແດນ ລວມທັງດ່ານພາສີສະໜາມບິນສາກົນ ຕ້ອງໄດ້ກຳນົດ ແລະ ຈັດສັນເລນ (Channel) ສຳລັບຂາເຂົ້າ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ໂດຍສານ ແລະ ພາຫະນະ ທີ່ມີເຄື່ອງຂອງຕ້ອງແຈ້ງພາສີ (Goods to Declare) ແລະ ບໍ່ມີເຄື່ອງຂອງຕ້ອງແຈ້ງພາສີ (Nothing to Declare), ລວມເຖິງການຈັດສັນບ່ອນຈອດລົດ ທີ່ມີເຄື່ອງຂອງຕິດຕົວຜູ້ໂດຍສານໄວ້ສະເພາະ ໃຫ້ເໝາະສົມ ເພື່ອລໍຖ້າການແຈ້ງ ແລະ ຊຳລະອາກອນມູນຄ່າເພີ່ມ;
- ເຈົ້າໜ້າທີ່ພາສີປະຈຳດ່ານ ມີໜ້າທີ່ຄຸ້ມຄອງ, ກວດກາ ເຄື່ອງຂອງນຳເຂົ້າຕົວຈິງ ແລະ ການຄິດໄລ່ອາກອນມູນຄ່າເພີ່ມ ເພື່ອຢັ້ງຢືນຄວາມຖືກຕ້ອງໃສ່ແບບພິມໃບແຈ້ງ ຕາມລະບຽບການກຳນົດ;
- ຜູ້ໂດຍສານ ຕ້ອງຊຳລະເງິນອາກອນມູນຄ່າເພີ່ມ ທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ກ່ອນຈະນຳເອົາເຄື່ອງຂອງອອກຈາກດ່ານພາສີຊາຍແດນ;
- ໃນການຈັດເກັບອາກອນມູນຄ່າເພີ່ມ ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ, ກົມພາສີ ຈະໄດ້ພັດທະນານຳໃຊ້ລະບົບການຈັດເກັບແບບເອເລັກໂຕຣນິກ ເພື່ອອຳນວຍຄວາມສະດວກ ແລະ ສ້າງຄວາມໂປ່ງໃສ ໃນການ ຈັດຕັ້ງປະຕິບັດຢູ່ບັນດາດ່ານພາສີຊາຍແດນ.

6. ວິທີການຈັດເກັບອາກອນມູນຄ່າເພີ່ມ (10%) ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານ

6.1. ຄວາມຮັບຜິດຊອບຂອງເຈົ້າໜ້າທີ່ພາສີປະຈຳດ່ານພາສີຊາຍແດນ :

- ຕ້ອງໄດ້ກວດກາໃບແຈ້ງ ແລະ ເຄື່ອງຂອງຕິດຕົວຜູ້ໂດຍສານ ເພື່ອຮັບຮອງ ແລະ ລົງລາຍເຊັນ ໃສ່ແບບພິມໃບແຈ້ງ;
- ຕ້ອງບໍລິການວ່ອງໄວ, ໂປ່ງໃສ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ໂດຍສານ ເພື່ອບໍ່ໃຫ້ເກີດສະພາບສິນຄ້າແອອັດ ໃນການລໍຖ້າເສຍອາກອນມູນຄ່າເພີ່ມ;
- ຄິດໄລ່ອາກອນມູນຄ່າເພີ່ມ ໃນອັດຕາສິບສ່ວນຮ້ອຍ (10%) ຂອງມູນຄ່າເຄື່ອງຂອງຕິດຕົວຜູ້ໂດຍສານ ທີ່ມີຈຳນວນເງິນສູງກວ່າຫ້າສິບ (50) ໂດລາສະຫະລັດ (ຫຼື ທຽບເທົ່າສະກຸນເງິນກີບ ຫຼື ສະກຸນເງິນອື່ນ ຕາມອັດຕາແລກປ່ຽນທະນາຄານ) ຕໍ່ຄົນ/ຄັ້ງ ໂດຍໃຫ້ຫັກລົບອາກອນມູນຄ່າເພີ່ມ (VAT) ທີ່ໄດ້ຈ່າຍຈາກການຊື້-ຂາຍ ຢູ່ປະເທດຕົ້ນທາງ;
- ກໍລະນີມູນຄ່າເຄື່ອງຂອງໃນໃບເກັບເງິນ (Bill) ຫາກເປັນສະກຸນເງິນຕາຕ່າງປະເທດ ຕ້ອງໄດ້ຄິດໄລ່ເປັນເງິນສະກຸນກີບ ຕາມອັດຕາແລກປ່ຽນຂອງທະນາຄານ ເພື່ອເປັນພື້ນຖານຄິດໄລ່ ແລະ ຊຳລະອາກອນມູນຄ່າເພີ່ມ ເປັນເງິນກີບ ຕາມລະບຽບການກຳນົດ;
- ກໍລະນີຜູ້ໂດຍສານມີໃບເກັບເງິນບໍ່ຄົບຖ້ວນ, ບໍ່ຊັດເຈນ ຫຼື ບໍ່ມີ, ເຈົ້າໜ້າທີ່ພາສີ ມີສິດປະເມີນມູນຄ່າເຄື່ອງຂອງດັ່ງກ່າວ ໃຫ້ແທດເໝາະກັບຕົວຈິງ ໂດຍນຳໃຊ້ຂໍ້ມູນດ້ານລາຄາຂອງເຄື່ອງຂອງທີ່ຄ້າຍຄືກັນ ຫຼື ຄືກັນ ທີ່ມີການແຈ້ງຄັ້ງກ່ອນ ເພື່ອເປັນພື້ນຖານຄິດໄລ່ ແລະ ຊຳລະອາກອນມູນຄ່າເພີ່ມ. ໃນການຈັດຕັ້ງປະຕິບັດຕົວຈິງ ເຈົ້າໜ້າທີ່ພາສີຕ້ອງອະທິບາຍ, ຊີ້ແຈງເຫດຜົນ ໃນການປະເມີນມູນຄ່າເຄື່ອງຂອງດັ່ງກ່າວ ໃຫ້ຜູ້ໂດຍສານໄດ້ຮັບຊາບ ຕາມລະບຽບການ.

6.2. ຄວາມຮັບຜິດຊອບຂອງຜູ້ໂດຍສານ :

- ຕ້ອງແຈ້ງຂໍ້ມູນເຄື່ອງຂອງຕົວຈິງ ທີ່ຕົນນຳເຂົ້າ ແລະ ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງດ້ວຍຕົນເອງ ລົງໃນແບບພິມໃບແຈ້ງຂອງລັດຖະການພາສີ ໃຫ້ຢ່າງຖືກຕ້ອງ ແລະ ຄົບຖ້ວນ;
- ຕ້ອງມີຄວາມຈິງໃຈ ແລະ ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ພາສີ ໃນເວລາດຳເນີນການແຈ້ງ, ການກວດກາເຄື່ອງຂອງ;
- ໃນກໍລະນີ ຜູ້ໂດຍສານ ມີໃບເກັບເງິນບໍ່ຄົບຖ້ວນ ຫຼື ໃບເກັບເງິນບໍ່ຊັດເຈນ ຫຼື ບໍ່ມີ, ຕ້ອງມີຄວາມຈິງໃຈແຈ້ງມູນຄ່າເຄື່ອງຂອງຕົວຈິງຕໍ່ເຈົ້າໜ້າທີ່ພາສີ ເພື່ອເປັນພື້ນຖານຄິດໄລ່ໃນການຈັດເກັບອາກອນມູນຄ່າເພີ່ມ;
- ຕ້ອງໄດ້ຊຳລະອາກອນມູນຄ່າເພີ່ມ ຢ່າງຄົບຖ້ວນ ຕາມລະບຽບການກຳນົດ.

7. ມາດຕະການ

- ຫ້າມພະນັກງານ ແລະ ເຈົ້າໜ້າທີ່ພາສີ ອະນຸຍາດໃຫ້ນຳເອົາສິນຄ້າ, ເຄື່ອງຂອງ ທີ່ເປັນລັກສະນະສິນຄ້າ ມາແຈ້ງເສຍອາກອນມູນຄ່າເພີ່ມໃນອັດຕາສິບສ່ວນຮ້ອຍ (10%) ຊຶ່ງບໍ່ສອດຄ່ອງກັບຂໍ້ກຳນົດຂອງ ກະຊວງການເງິນ ສະບັບເລກທີ 2834/ກງ, ລົງວັນທີ 30 ສິງຫາ 2016;
- ບຸກຄົນ, ນິຕິບຸກຄົນ ລວມເຖິງເຈົ້າໜ້າທີ່ພາສີ ທີ່ບໍ່ປະຕິບັດຕາມບົດແນະນຳສະບັບນີ້ ຖືວ່າເປັນການລະເມີດຕໍ່ກົດໝາຍວ່າດ້ວຍພາສີ ແລະ ລະບຽບການທີ່ກ່ຽວຂ້ອງ.

8. ການຈັດຕັ້ງປະຕິບັດ

ມອບໃຫ້ ພະແນກເຕັກໂນໂລຊີ, ຂໍ້ມູນຂ່າວສານ ແລະ ແຜນການສ້າງ ແລະ ພັດທະນາ ລະບົບບັນຊີຕິດຕາມແບບທົ່ວໄປ ແລະ/ຫຼື ແບບເອເລັກໂຕຣນິກ ໃນການຄຸ້ມຄອງການຈັດເກັບຢ່າງຮັດກຸມ ແລະ ມີການສະຫຼຸບລາຍຮັບປະຈຳວັນ ຕາມລະບຽບການ.

ມອບໃຫ້ລັດຖະການພາສີແຕ່ລະຂັ້ນ ດຳເນີນການເຜີຍແຜ່ ແນະນຳໃຫ້ພະນັກງານ ແລະ ເຈົ້າໜ້າທີ່ພາສີ, ບຸກຄົນ ແລະ ນິຕິບຸກຄົນ ຫຼື ການຈັດຕັ້ງໃນສັງຄົມ ຮັບຊາບຢ່າງທົ່ວເຖິງ ເພື່ອຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດ.

ກົມພາສີ ຈະເປັນຜູ້ພິຈາລະນາຄົ້ນຄ້ວາ ແລະ ອອກຂໍ້ຕົກລົງໃຫ້ດ່ານພາສີຊາຍແດນ ທີ່ມີເງື່ອນໄຂ ເພື່ອດຳເນີນການຈັດເກັບອາກອນມູນຄ່າເພີ່ມອັດຕາສິບສ່ວນຮ້ອຍ (10%) ເປັນແຕ່ລະກໍລະນີ.

**9. ຜົນສັກສິດ**

ບົດແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ທີ່ໄດ້ລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

ບ່ອນສົ່ງ :

| | |
|---|---|
| - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ | 1 ສະບັບ "ໃຊ້ຕາງລາຍງານ" |
| - ທ່ານຮອງລັດຖະມົນຕີກະຊວງການເງິນ, ຜູ້ຊີ້ນຳ | 1 ສະບັບ "ໃຊ້ຕາງລາຍງານ" |
| - ຂະແໜງການກ່ຽວຂ້ອງ, ຂະແໜງລະ | 1 ສະບັບ "ເພື່ອຊາບ" |
| - ບັນດາພະແນກການກົມພາສີ, ພະແນກລະ | 1 ສະບັບ "ເພື່ອຈັດຕັ້ງປະຕິບັດ" |
| - ບັນດ່ານພາສີຊາຍແດນ, ດ່ານລະ | 1 ສະບັບ "ເພື່ອຈັດຕັ້ງປະຕິບັດ ແລະ ເຜີຍແຜ່" |
| - ເກັບມ້ຽນ | 4 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====------

ກົມພາສີ

ເລກລຳດັບ 000000000001

ດ່ານພາສີສາກົນ ............

# ໃບແຈ້ງເຄື່ອງຂອງຕິດຕົວຜູ້ໂດຍສານ

## CUSTOMS DECLARATION FORM FOR PERSONAL EFFECTS

| | | | | |
|---|---|---|---|---|
| ຊື່ ແລະ ນາມສະກຸນ<br>Name and Surname | | ທີ່ຢູ່<br>Address | | |
| ສັນຊາດ<br>Nationality | | ໜັງສືຜ່ານແດນເລກທີ<br>Passport/Border Pass No : | | |
| ທະບຽນລົດ/ຖ້ຽວບິນ<br>Car/Flight No : | | ຈຳນວນຜູ້ຕິດຕາມ .......... ຄົນ/Person<br>Number of Accompanying Member | ມາເຖິງວັນທີ<br>Arrival Date | |

| ປະເພດເຄື່ອງຂອງ ທີ່ຕ້ອງແຈ້ງ<br>Type of Goods to Declare | | | | |
|---|---|---|---|---|
| ລາຍລະອຽດເຄື່ອງຂອງ<br>Description of Goods | ຈຳນວນລາຍການ<br>Quantity | ມູນຄ່າເປັນເງິນຕາ<br>Value in Foreign Currency | ມູນຄ່າເປັນເງິນກີບ<br>Value in Kip | ໃບເກັບເງິນ<br>Bill |
| ເຄື່ອງອຸປະໂພກ ບໍລິໂພກ | | | | |
| ເຄື່ອງໄຟຟ້າ | | | | |
| ເຄື່ອງກໍ່ສ້າງ | | | | |
| ອື່ນໆ | | | | |
| ລວມມູນຄ່າເປັນເງິນກີບ = | | | | |
| ມູນຄ່າຫັກລົບອາກອນມູນຄ່າເພີ່ມຈາກປະເທດຕົ້ນທາງ (ຖ້າມີ) = | | | | |
| ມູນຄ່າຫັກລົບ (50 ໂດລາສະຫະລັດ/ຄົນ) ຖ້າມີ = | | | | |
| ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ = | | | | |
| ອັດຕາອາກອນມູນຄ່າເພີ່ມ 10 % = | | | | |
| ລວມຄ່າອາກອນມູນຄ່າເພີ່ມ = | | | | |

16/9/2016 ບຸນປະເສີດ ສີກຸນລະບຸດ

ຂ້າພະເຈົ້າ ຂໍຢັ້ງຢືນວ່າ ເຄື່ອງຂອງດັ່ງກ່າວແມ່ນມີຈຸດປະສົງນຳມາຮັບໃຊ້ຄອບຄົວ ແລະ ທຸກຂໍ້ມູນຕ່າງໆ ທີ່ໄດ້ລະບຸໃນໃບແຈ້ງນີ້ ແມ່ນຖືກຕ້ອງຕາມຄວາມຈິງທຸກປະການ.

**ເຈົ້າໜ້າທີ່ພາສີ (ຜູ້ກວດກາ)**

ລາຍເຊັນຜູ້ແຈ້ງ

**ສຳລັບເຈົ້າໜ້າທີ່ພາສີ**

ມູນຄ່າດັດປັບ : ........................................ ລວມຄ່າອາກອນມູນຄ່າເພີ່ມ :........................................

ເຫດຜົນ : ..........................................................................................................................

..........................................................................................................................